NSW KIDS + FAMILIES

SWIS-H
STATEWIDE INFANT SCREENING - HEARING



# ຂ້ອຍໄດ້ເລືອກວ່າບໍ່ໃຫ້ກວດເບິ່ງຄວາມ ສາມາດໃນການຟັງສຽງຂອງລູກຂ້ອຍ. ມີຫຍັງແດ່ທີ່ຂ້ອຍຕ້ອງຮູ້?

ລູກຂອງທ່ານຈະຖືກສເນີໃຫ້ມີການກວດສຸຂພາບຫຼາຍຢ່າງໃນລະຍະສອງ ສາມອາທິດທີ່ເກີດມາ. ນຶ່ງໃນການກວດເຫຼົ່ານີ້ແມ່ນກວດເບິ່ງການເສັຍຫູ.

ການກວດເບິ່ງຄວາມສາມາດໃນການຟັງ ຈະ ມີໃຫ້ໃນທັນທີຫຼັງຈາກການຄອດ ແລະສາມາດເຮັດໄດ້ທີ່ໂຮງໝໍ ກ່ອນຫຼືຫຼັງອອກໂຮງໝໍ ຫຼື ຕາມສູນຊຸມຊົນທ້ອງຖິ່ນ.

ບັນດາພໍ່ແມ່ຈະປະຕິເສດບໍ່ຍິນຍອມ ໃຫ້ລູກເກີດໃໝ່ຂອງຕົນ ຖືກກວດເບິ່ງຄວາມສາ ມາດໃນຟັງສຽງ ກໍໄດ້. ອັນນີ້ຈະຖືກບັນທຶກລົງໃນປຶ້ມສຸຂພາບສ່ວນຕົວ (ປຶ້ມສີຟ້າ). ນອກຈາກນີ້ ທ່ານຍັງຈະຖືກຂໍໃຫ້ເຊັນຊື່ຢູ່ໃນຟອມວ່າໃນເວລາທີ່ໄດ້ສເນີການກວດໃຫ້ທ່ານນັ້ນທ່ານໄດ້ປະຕິເສດ.

ຖ້າທ່ານເລືອກວ່າບໍ່ໃຫ້ລູກທ່ານກວດ ທ່ານກໍຍັງຈະໄດ້ຖືກແຈ້ງໃຫ້ຊາບເຖິງ ການກວດ ແລະ ຄວາມສໍາຄັນຂອງມັນ.

## ເປັນຫຍັງຈຶ່ງສເນີໃຫ້ມີການກວດ?

ມີເດັກປະມານນຶ່ງຫາສອງໃນຈໍານວນ ເດັກທຸກໆ1000ຄົນທີ່ເກີດມາຈະມີ ອາການເສັຍຫູ.

ມັນເປັນສິ່ງສໍາຄັນທີ່ຕ້ອງຊອກຮູ້ໃຫ້ໄວເທົ່າທີ່ໄວໄດ້ວ່າລູກທ່ານໄດ້ຍິນສຽງດີ ປານໃດເພື່ອວ່າທ່ານແລະລູກທ່ານສາມາດໄດ້ຮັບຄໍາແນະນໍາທີ່ຖືກຕ້ອງພ້ອມທັງການອູ້ມຊູ.

ພໍເຖິງເວລາທີ່ບັນດາເດັກເວົ້າຄໍາທໍາອິດຂອງພວກເຂົາໄດ້ ພວກເຂົາໄດ້ຟັງວິທີທີ່ພວກເຮົາເວົ້າມາໄດ້ປະມານນຶ່ງປີແລ້ວ.

ຖ້າເດັກບໍໄດ້ຍິນດີເທົ່າໃດໃນລະຍະນີ້ ການພັທນາການເວົ້າ ແລະ ພາສາຂອງເຂົາກໍຈະໄດ້ຮັບການກະທົບກະເທືອນ.

ຖ້າທ່ານຕ້ອງການຂໍ້ມູນເພີ້ມຕື່ມ ຫຼື ທ່ານປ່ຽນໃຈແລະຢາກໃຫ້ລູກທ່ານໄດ້ຮັບການ ກວດ ຈົ່ງຕິດຕໍ່ເຈົ້າໜ້າທີ່ປະສານງານຂອງໂຄງການ SWIS-H ໃນເຂດທ້ອງຖິ່ນຂອງທ່ານໃຫ້ໄວເທົ່າທີ່ໄວໄດ້.

## ຂ້ອຍຕ້ອງເຮັດຫຍັງແດ່ໃນຂນະທີ່ລູກຂ້ອຍເຕີບໃຫຍ່ຂຶ້ນ?

ການໄດ້ຍິນອາດຈະບໍ່ມີສະພາບຄືເກົ່າເມື່ອ ເວລາຜ່ານໄປ. ມັນເປັນສິ່ງສໍາຄັນໃນການຄວບຄຸມການ ພັທນາການເວົ້າແລະພາສາຂອງລູກທ່ານ ພ້ອມທັງການຕອບຮັບຕໍ່ສຽງຂອງພວກເຂົາອີກນໍາ.

ທ່ານສາມາດເບິ່ງບັນຊີການກວດຢູ່ໃນໜ້າຕໍ່ໄປເພື່ອຄວບຄຸມຄວາມກ້າວໜ້າຂອງລູກທ່ານ.

ຖ້າທ່ານເປັນກັງວົນໃນການພັທນາຂອງການຟັງສຽງ ຫຼື ການເວົ້າແລະພາສາຂອງລູກທ່ານໃນອະນາຄົດ ກະຣຸນາຈັດໃຫ້ລູກທ່ານໄປກວດການຟັງສຽງ. ຈົ່ງສອບຖາມ ທ່ານໝໍຄອບຄົວຂອງທ່ານເພື່ອໃຫ້ເພິ່ນ ແນະນໍາສົ່ງໄປຫາບໍຣິການທີ່ເໝາະສົມເພື່ອກວດ ການຟັງສຽງ ຂອງລູກທ່ານ.

ການຟັງສຽງສາມາດກວດໄດ້ ບໍ່ວ່າອາຍຸ ຈະຢູ່ໃນຂັ້ນໃດ.

**ເພື່ອຊອກເອົາຂໍ້ມູນເພີ້ມຕື່ມ ຈົ່ງຕິດຕໍ່ ພະແນກ ເດັກ ແລະ ຄອບຄົວ ຣັດ NSW:**

ໂທຣະສັບ (02) 9391 9483

ເວັບໄຊຕ໌:
http://www.kidsfamilies.health.nsw.gov.au/programs/programs-and-initiatives/swis-h/

ການຕິດຕໍ່ໃນທ້ອງຖິ່ນ/ຣາຍລະອຽດຂອງການນັດໝາຍ

ເພື່ອຊອກເອົາຄໍາແນະນໍາດ້ານສຸຂພາບ ຈົ່ງ ຕິດຕໍ່ *healthdirect Australia*
http://www.healthdirect.gov.au/
**1800 022 222**

NSW GOVERNMENT | Health

NSW KIDS + FAMILIES

SWIS-H
STATEWIDE INFANT SCREENING - HEARING

# ບັນຊີກວດການຟັງສຽງ

| | |
|---|---|
| ເກີດໃໝ່ ຫາ 3 ເດືອນ | ມີປະຕິກິຣິຍາຕໍ່ສຽງດັງ |
| | ກາຍເປັນມິດງຽບຕໍ່ສຳນຽງ ຫຼື ສຽງທີ່ລື້ງເຄີຍ |
| | ເຮັດສຽງກູກູ |
| | ຕອບຮັບຕໍ່ຄວາມເວົ້າດ້ວຍການເບິ່ງໜ້າຄົນເວົ້າ |
| 3 -6 ເດືອນ | ຫຼຽວຕາມ ຫຼື ຫັນຫົວໄປຫາສຽງ |
| | ເລີ້ມເຮັດສຽງຄືຄຳເວົ້າ |
| | ຫົວແລະເຮັດສຽງຕ່າງໆເພື່ອສະແດງໃຫ້ຮູ້ວ່າເຂົາເຈົ້າຮູ້ສຶກຢ່າງໃດ |
| 6 – 9 ເດືອນ | ແບແບ “ດາດາ” “ມາມາ” “ບາບາ” |
| | ຮ້ອງ/ອອກສຽງເພື່ອຮຽກຮ້ອງຄວາມສົນໃຈ |
| | ຈະຕອບຮັບຕໍ່ຄຳວ່າ ”ບໍ່” ແລະ ຕໍ່ຊື່ຂອງຕົນເອງເລື້ອຍໆ |
| | ຕອບຮັບຕໍ່ການຮ້ອງເພງ ແລະ ດົນຕຣີ |
| 9 – 12 ເດືອນ | ລອກລຽນສຽງຄຳເວົ້າຂອງຄົນອື່ນ |
| | ເຂົ້າໃຈຄຳເວົ້າງ່າຍໆ ເຊັ່ນ “ໝາກບານ” “ໝາ” “ພໍ່” |
| | ຫັນຫົວໄປຫາສຽງທີ່ດັງຄ່ອຍໆ |
| | ເລີ້ມເວົ້າຄຳທຳອິດ |
| 12 – 18 ເດືອນ | ປະກົດວ່າເຂົ້າໃຈໃນຄຳເວົ້າໃໝ່ໆໃນແຕ່ລະອາທິດ |
| | ເຮັດຕາມຄຳເວົ້າບອກງ່າຍໆ ເຊັ່ນ ”ໄປເອົາໝາກບານ” |
| | ຊີ້ໄປຫາຄົນ ສ່ວນຕ່າງໆຂອງຮ່າງກາຍ ຫຼື ຂອງຫຼິ້ນໃນເມື່ອຖືກຖາມ |
| | ສືບຕໍ່ການຮຽນເວົ້າຄຳໃໝ່ໆເຖິງແມ່ນວ່າຈະບໍ່ຊັດແຈ້ງກໍຕາມ |
| 18 – 24 ເດືອນ | ມີຄຳເວົ້າລະຫວ່າງ 100 – 200ຄຳທີ່ພວກເຂົາໃຊ້ເປັນປະຈຳ |
| | ຟັງນິທານງ່າຍໆ ຫຼື ເພງ |
| | ປະສົມສອງຫຼືຫຼາຍຄຳເວົ້າເຂົ້າເປັນປໂຍກສັ້ນໆ ເຊັ່ນ “ຂໍນ້ຳໝາກໄມ້ຕື່ມອີກ” |

ໝາຍເຫດ:

NSW GOVERNMENT Health

© NSW Health March 2015 SHPN (NKF) 150270